# ຕະຫລາດທຶນຂອງ ສປປ ລາວ ສືບຕໍ່ກ້າວເດີນດ້ວຍຄວາມແຈ່ມໃສ




ໃນໄລຍະເວລາສາມທົດສະວັດກ່ວາຜ່ານມາທີ່ ສປປ ລາວ ລັດແຫ່ງຊັ້ນກຳມະກອນ ໄດ້ຜ່ານຜ່າຍ່ານທາງປະຫວັດສາດ ໂດຍພາຍໃຕ້ການນຳພາອັນປີຊາສາມາດ ແລະ ສະຫລາດ ສ່ອງໃສຂອງພັກປະຊາຊົນປະຕິວັດລາວອັນໄດ້ເຮັດໃຫ້ສາທາລະນະລັດທີ່ໜຸ່ມນ້ອຍໄດ້ຮັບການ ພັດທະນາໃຫ້ດີຂື້ນຢ່າງບໍ່ຢຸດຢັ້ງ, ເສດຖະກິດໄດ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ຕະຫລາດ ເງິນໄດ້ຮັບພາລະກິດອັນສຳຄັນ ແລະ ໄດ້ກາຍເປັນພາກສ່ວນໜຶ່ງທີ່ໄດ້ປະກອບສ່ວນອັນໃຫຍ່ ຫລວງເຂົ້າໃນການຈັດຕັ້ງສອງໜ້າທີ່ຍຸດທະສາດ ແລະ ພາລະກິດປ່ຽນແປງໃໝ່ຮອບດ້ານຢ່າງ ມີຫລັກການຂອງພັກເຮົາ.

ໂດຍອີງໃສ່ບາດກ້າວແຫ່ງການຂະຫຍາຍຕົວຂອງເສດຖະກິດຍຸກໃໝ່ທີ່ຢູ່ພາຍໃຕ້ການ ນຳພາຂອງພັກ ແລະ ມີການຄຸ້ມຄອງ-ດັດສົມຂອງລັດ ເຊິ່ງເຫັນວ່າມີຄວາມຕ້ອງການທຶນຢ່າງ ມະຫາສານ ແລະ ຍາວນານເພື່ອສະໜອງໃຫ້ແກ່ບັນດາທຸລະກິດ ແລະ ເສດຖະກິດໄດ້ຢ່າງ ພຽງພໍແນ່ໃສ່ສ້າງໃຫ້ທຸລະກິດ ແລະ ປະເທດຊາດມັ່ງຄັ່ງ-ເຂັ້ມແຂງ ແລະ ຈະເລີນສີວິໄລ ເປັນກ້າວໆ, ສະນັ້ນມັນຈື່ງມີຄວາມຈຳເປັນທີ່ຕ້ອງເກີດມີຕະຫລາດທຶນ (ຕະຫລາດຫລັກຊັບ) ເພື່ອປະກອບສ່ວນເຂົ້າໃນການຂັບເຄື່ອນກົນໄກເສດຖະກິດສູ່ເປົ້າໝາຍທີ່ວາງໄວ້.

ກອງປະຊຸມຮອບປະຖົມມະລຶກ ຂອງຄະນະກຳມະການຄຸ້ມຄອງຫລັກຊັບ ແລະ ຕະ ຫລາດຫລັກຊັບ(ຄລຕ) ເມື່ອວັນທີ 3 ກັນຍາຜ່ານມາເຊິ່ງເປັນການຫັນປ່ຽນ ແລະ ຍົກລະດັບ ຂີດຄວາມສາມາດໃນການສ້າງຕະຫລາດຫລັກຊັບ ແລະ ໄດ້ມີການດຳເນີນການກະກຽມສ້າງ

ອ້າງອີງຈາກໜັງສືພິມປະຊາຊົນ, ສະບັບວັນທີ 21 ກັນຍາ 2009

ຕັ້ງຕະຫລາດຫລັກຊັບເປັນວຽກໜຶ່ງທີ່ເປັນແຜນງານບູລິມະສິດຂອງລັດຖະບານ ເຊິ່ງໃນໄລຍະໜຶ່ງປີກ່ວາຜ່ານມາວຽກງານດັ່ງກ່າວກໍ່ໄດ້ມີຄວາມຄືບໜ້າເປັນຢ່າງດີໂດຍໄດ້ສຳເລັດການນຳສະເໜີຮ່າງດຳລັດວ່າດ້ວຍຫລັກຊັບ ແລະ ຕະຫລາດຫລັກຊັບຕໍ່ກອງປະຊຸມຂອງລັດຖະບານເມື່ອເດືອນພຶດສະພາຂອງປີກາຍນີ້, ກອງໄດ້ຮັບຮອງເອົາດ້ານຫລັກການ ແລະ ໄດ້ລົງນາມໃນບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມືລະຫວ່າງ ສປປ ລາວ ກັບ ຕະຫລາດຫລັກຊັບ ສ.ເກົາຫລີ, ຕະຫລາດຫລັກຊັບແຫ່ງປະເທດໄທ, ພົວພັນ ແລະ ແລກປ່ຽນກັບ ສ.ສ ຫວຽດນາມ, ສຳເລັດຄວາມເປັນໄປໄດ້ໃນການສ້າງຕັ້ງຕະຫລາດຫລັກຊັບ ໂດຍໄດ້ອອກລະບຽບວ່າດ້ວຍການອອກຫລັກຊັບວິສາຫະກິດ, ຄົ້ນຄ້ວາຄວາມເປັນໄປໄດ້ໃນການຫັນທຸລະກິດຂອງລັດຈຳນວນໜຶ່ງ ໄປສູ່ກຳສິດຮຸ້ນສ່ວນດ້ວຍການອອກຮຸ້ນທຶນ, ຈັດຕັ້ງການເຜີຍແຜ່ຄວາມຮູ້-ຄວາມເຂົ້າໃຈກ່ຽວກັບວຽກງານຕະຫລາດຫລັກຊັບໃຫ້ມວນຊົນເຂົ້າໃຈຢ່າງກ້ວາງຂວາງ,ໄດ້ຄົ້ນຄ້ວາສະເໜີລັດຖະບານແຕ່ງຕັ້ງ ຄລຕ, ເຊັນສັນຍາຮ່ວມທຶນວ່າດ້ວຍການສ້າງຕັ້ງຕະຫລາດຫລັກຊັບລະຫວ່າງທະນາຄານແຫ່ງ ສປປ ລາວ ກັບ ຕະຫລາດຫລັກຊັບ ເກົາຫລີ ໃນທ້າຍເດືອນກໍລະກົດຜ່ານມາໂດຍແມ່ນທ່ານ ພູເພັດ ຄຳພູນວົງ ຜູ້ວ່າການທະນາຄານແຫ່ງ ສປປ ລາວ (ທຫລ) ທ່ານ Junwanlee ປະທານຕະຫລາດຫລັກຊັບແຫ່ງ ສ.ເກົາຫລີ, ໄດ້ກະກຽມສະຖານທີ່, ອອກແບບອາຄານຕະຫລາດຫລັກຊັບ, ຈັດຕັ້ງການຝຶກອົບຮົມນັກວິຊາຊີບດ້ານທຸລະກິດຫລັກຊັບ, ປະຈຸບັນພວມສືບຕໍ່ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການປັບປຸງຮ່າງດຳລັດວ່າດ້ວຍຫລັກຊັບ ແລະ ຕະຫລາດຫລັກຊັບ ເພື່ອນຳສະເໜີທ່ານນາຍົກລັດຖະມົນຕີພິຈາລະນາ ແລະ ຮັບຮອງ, ນອກນີ້ກໍ່ໄດ້ຊຸ້ນຊ້ຽວກຽມຮ່າງລະບຽບການຕ່າງໆ ເພື່ອຜັນຂະຫຍາຍດຳລັດ ແລະ ໄດ້ປະຕິບັດວຽກງານສຳຄັນອື່ນໆອີກ.

ກອງປະຊຸມຮອບທຳອິດຂອງ ຄລຕ ໂດຍພາຍໃຕ້ການເປັນປະທານຂອງທ່ານ ສົມສະຫວາດ ເລັ່ງສະຫວັດ ຮອງນາຍົກລັດຖະມົນຕີ, ຜູ້ປະຈຳການລັດຖະບານ, ປະທານຊີ້ນຳການກະກຽມສ້າງຕັ້ງຕະຫລາດຫລັກຊັບ ເຊິ່ງກອງປະຊຸມໄດ້ຄົ້ນຄ້ວາ-ຮັບຮອງເອົາຮ່າງຂໍ້ກຳນົດກ່ຽວກັບພາລະບົດບາດ, ສຳນັກງານຕະຫລາດຫລັກຊັບ ແລະ ຜ່ານແຜນການເຄື່ອນໄຫວຂອງຕະຫລາດຫລັກຊັບ ແຕ່ນີ້ຫາປີ 2010 ແລະ ໃນຄະນະດຽວກັນກໍ່ໄດ້ຄົ້ນຄ້ວາຮັບຮອງເອົາ ຄລຕ ເຊິ່ງ ທ່ານ ສົມສະຫວາດ ເລັ່ງສະຫວັດ ຮອງນາຍົກລັດຖະມົນຕີ, ຜູ້ປະຈຳການລັດຖະບານເປັນປະທານ ຄລຕ, ຮອງປະທານປະກອບດ້ວຍ ທ່ານ ພູເພັດ ຄຳພູນວົງ ຜູ້ວ່າການ ທຫລ ທັງເປັນຜູ້ປະຈຳການ ຄລຕ, ທ່ານ ໄຊເຊັງລີ ເຕັງເບຼຍຈື ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ (ສນຍ) ແລະ ກຳມະການປະກອບດ້ວຍ ທ່ານ ສີສູນທອນ ສິດທິມໍລະດາ ກຳມະການຄະນະເລຂາທິການລັດຖະບານ (ຄລບ), ທ່ານ ບຸນທະ ວິສີສຸພັນທອງ ລັດຖະມົນຕີຊ່ວຍວ່າການການກະຊວງແຜນການ ແລະ ລົງທຶນ, ທ່ານ ນາງ ວຽງທອງ ສີພັນດອນ ລຕຊ ການເງິນ, ທ່ານ ນາງ ເຂັມມະນີ ພົນເສນາ ລຕຊ ອຸດສາຫະກຳ-ການຄ້າ, ທ່ານ ກີສິນ ພັນງາມ ລຕຊ ຍຸຕິທຳ, ທ່ານ ຄຳມູນ ວິພົງໄຊ ຮອງຫົວໜ້າທະບວງການປົກຄອງ-ຄຸ້ມຄອງລັດຖະກອນ ແລະ ທ່ານ ເດດພູວັງ ມູລຣັດນ໌ ຜູ້ຊ່ວຍຜູ້ວ່າການ ທຫລ.

ອ້າງອີງຈາກໜັງສືພິມປະຊາຊົນ, ສະບັບວັນທີ 21 ກັນຍາ 2009

ເພື່ອເຮັດໃຫ້ອົງປະກອບຄົບຖ້ວນ ແລະ ມີກົງຈັກໃນການຮັບໃຊ້ແກ່ ຄລຕ, ທ່ານ ປະທານ ຄລຕ ຈຶ່ງໄດ້ສະເໜີໃຫ້ ທ່ານ ເດດພູວັງ ມູລຣັຕນ໌ ເປັນຫົວໜ້າສຳນັກງານ ຄລຕ ອີກຕຳແໜ່ງໜຶ່ງ ແລະ ກໍ່ໄດ້ມີການເຫັນດີ ແລະ ຮັບຮອງເອົາຈາກກອງປະຊຸມດັ່ງກ່າວ, ກອງປະຊຸມ ຄລຕ ຄັ້ງປະຖົມມະລຶກໄດ້ດຳເນີນໄປດ້ວຍບັນຍາກາດແຫ່ງຄວາມເຄັ່ງຮ້ອນ ແລະ ມີຄວາມຮັບຜິດຊອບສູງ ແລະ ກໍ່ຈະມີກອງປະຊຸມກັນອີກໃນເດືອນຕຸລາ ເພື່ອເລັ່ງໃສ່ດຳເນີນການ ເຄື່ອນໄຫວໃຫ້ທ່ວງທັນເວລາຕາມທີ່ໄດ້ວາງໄວ້.

ອ້າງອີງຈາກໜັງສືພິມປະຊາຊົນ, ສະບັບວັນທີ 21 ກັນຍາ 2009